ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 121 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 02 / 09 / 24

# ຂໍ້ຕົກລົງ

## ວ່າດ້ວຍ ການແຕ່ງຕັ້ງ ຄະນະຊີ້ນໍາວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂັ້ນສູນກາງ

- ອີງຕາມ ຄໍາສັ່ງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 097/ກມພສ, ລົງວັນທີ 18 ກຸມພາ 2020;
- ອີງຕາມ ບົດແນະນໍາ ຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 02/ຫສພ, ລົງວັນທີ 21 ກຸມພາ 2023;
- ອີງຕາມ ມະຕິ ກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 134/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິ ກອງປະຊຸມ ລັດຖະບານ ເປີດກວ້າງ ຄັ້ງທີ I ປະຈໍາປີ 2024 ສະບັບເລກທີ 08/ລບ, ລົງວັນທີ 24 ກໍລະກົດ 2024;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 4318/ກປ, ລົງວັນທີ 12 ສິງຫາ 2024.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງ ຄະນະຊີ້ນໍາວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂັ້ນສູນກາງ, ປະກອບດ້ວຍພາກສ່ວນ ກ່ຽວຂ້ອງ ດັ່ງນີ້:

1. ທ່ານ ສຈ.ປອ. ກິແກ້ວ ໄຂຄໍາພິທູນ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນໍາວຽກງານຂົງເຂດການປົກຄອງ ແລະ ວັດທະນະທໍາ-ສັງຄົມ ເປັນຫົວໜ້າຄະນະ;
2. ທ່ານ ສອນໄຊ ສິດພະໄຊ ລັດຖະມົນຕີ ປະຈໍາສໍານັກງານນາຍົກລັດຖະມົນຕີ ເປັນຮອງຫົວໜ້າຄະນະ;
3. ທ່ານ ຮສ.ປອ. ລິນຄໍາ ດວງສະຫວັນ ລັດຖະມົນຕີ ກະຊວງ ກະສິກໍາ ແລະ ປ່າໄມ້ ເປັນຮອງຫົວໜ້າຄະນະ, ທັງເປັນຜູ້ປະຈໍາການ;
4. ທ່ານ ນິສິດ ແກ້ວປັນຍາ ຮອງລັດຖະມົນຕີ ກະຊວງ ພາຍໃນ ເປັນຄະນະ;
5. ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ເປັນຄະນະ;
6. ທ່ານ ພົທ ທອງລອຍ ສິລິວົງ ຮອງລັດຖະມົນຕີ, ຫົວໜ້າກົມໃຫຍ່ການເມືອງກອງທັບ ກະຊວງ ປ້ອງກັນປະເທດ ເປັນຄະນະ;
7. ທ່ານ ພົຕ ສຸວັນ ສີສຸພາບມີໄຊ ຄະນະປະຈໍາພັກ, ຫົວໜ້າກົມໃຫຍ່ການເມືອງ ກະຊວງ ປ້ອງກັນຄວາມສະຫງົບ ເປັນຄະນະ;
8. ທ່ານ ບຸນປອນ ວັນນະຈິດ ຮອງລັດຖະມົນຕີ ກະຊວງ ການເງິນ ເປັນຄະນະ;
9. ທ່ານ ລັນ ແສງອາພອນ ຮອງລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
10. ທ່ານ ປອ ມະໂນທອງ ວົງໄຊ ຮອງລັດຖະມົນຕີ ກະຊວງ ອຸດສາຫະກໍາ ແລະ ການຄ້າ ເປັນຄະນະ;
11. ທ່ານ ໄຊລີຊາ ອິນສີຊຽງໃໝ່ ຮອງລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ;

12. ທ່ານ ຈັນທະບຸນ ສຸກອາລຸນ ຮອງລັດຖະມົນຕີ ກະຊວງ ພະລັງງານ ແລະ ບໍ່ແຮ່ ເປັນຄະນະ;
13. ທ່ານ ປອ ໄຊມະຄອນ ອິນທະວົງ ຮອງລັດຖະມົນຕີ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;
14. ທ່ານ ກິ່ງມະໄນ ພິມມະຫາໄຊ ຮອງລັດຖະມົນຕີ ກະຊວງ ສຶກສາທິການ ແລະ ກິລາ ເປັນຄະນະ;
15. ທ່ານ ດຣ ສະຫນອງ ທອງຊະນະ ຮອງລັດຖະມົນຕີ ກະຊວງ ສາທາລະນະສຸກ ເປັນຄະນະ;
16. ທ່ານ ລີປາວ ຢາງ ຮອງລັດຖະມົນຕີ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
17. ທ່ານ ນາງ ດາລານີ ພົມມະວົງສາ ຮອງລັດຖະມົນຕີ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
18. ທ່ານ ທອງພັດ ວົງມະນີ ຮອງລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຄະນະ;
19. ທ່ານ ປອ ເຂັ້ມຄຳ ແກ້ວທຸຈັນ ຮອງລັດຖະມົນຕີ, ຮອງຫົວໜ້າ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ;
20. ທ່ານ ອາລຸນ ບຸນຍົງ ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ເປັນຄະນະ;
21. ທ່ານ ອຸເດດ ສຸວັນນະວົງ ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເປັນຄະນະ;
22. ທ່ານ ວິສອນ ໄຊລົງຄາມ ຜູ້ອຳນວຍການ ທະນາຄານ ພັດທະນາຊົນນະບົດ ເປັນຄະນະ.

- ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະ ດັ່ງກ່າວ ມີດັ່ງນີ້:

1) ມີບົດບາດ ເປັນເສນາທິການໃຫ້ແກ່ລັດຖະບານ ແລະ ທ່ານນາຍົກລັດຖະມົນຕີ ໃນການຊີ້ນຳ, ປະສານງານ, ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃນຂອບເຂດທົ່ວປະເທດ ໃຫ້ໄປຕາມແນວທາງ, ແຜນນະໂຍບາຍ ທີ່ວາງອອກ ໂດຍຖືເອົາກະຊວງກະສິກຳ ແລະ ປ່າໄມ້ ເປັນບ່ອນປະຈຳການ ແລະ ເປັນໃຈກາງໃນການປະສານສົມທົບ ເພື່ອຈັດຕັ້ງປະຕິບັດ;
2) ຄົ້ນຄວ້າ ຫັນເອົາທິດທາງ ຂອງພັກ, ນະໂຍບາຍ ຂອງລັດ ໃຫ້ເປັນແຜນງານສະເພາະ ແລະ ໂຄງການລະອຽດ ເພື່ອສຸມໃສ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃຫ້ໄດ້ຕາມເປົ້າໝາຍ ແລະ ຄາດໝາຍ ທີ່ສູນກາງພັກ, ສະພາແຫ່ງຊາດ ແລະ ລັດຖະບານ ໄດ້ວາງອອກ;
3) ປະສານງານ ແລະ ຊຸກຍູ້ ຂະແໜງການກ່ຽວຂ້ອງ ແລະ ທ້ອງຖິ່ນ ຄົ້ນຄວ້າສ້າງແຜນຍຸດທະສາດການລົງທຶນ ໄລຍະຍາວ, ໄລຍະກາງ ແລະ ປະຈຳປີ ກ່ຽວກັບ ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ສັງລວມບັນດາທິດທາງ, ແຜນການ, ແຜນງານ ແລະ ໂຄງການ ຂອງບັນດາກະຊວງ, ອົງການ ແລະ ອຳນາດການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເພື່ອສະເໜີລັດຖະບານ ພິຈາລະນາຮັບຮອງ; ປຸກລະດົມຂົນຂວາຍແຫຼ່ງທຶນ ຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນການຈັດຕັ້ງປະຕິບັດວຽກງານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ;
4) ເປັນໃຈກາງ ປະສານສົມທົບ, ສ້າງເງື່ອນໄຂ ສະດວກ, ຊີ້ນຳ, ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ ຂອງຂະແໜງການ ແລະ ທ້ອງຖິ່ນ ກ່ຽວກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
5) ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດ ບັນດາໂຄງການລົງທຶນ ຂອງລັດ ລວມທັງທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຈາກຕ່າງປະເທດ ທີ່ສະໜັບສະໜູນໃຫ້ແກ່ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ການຈັດສັນພູມລຳເນົາ ແລະ ອາຊີບ ເພື່ອສັງລວມລາຍງານໃຫ້ກະຊວງແຜນການ ແລະ ການລົງທຶນ ສັງລວມເຂົ້າໃນບົດສະຫຼຸບລາຍງານ ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນແຕ່ລະໄລຍະ;

6) ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ, ສ້າງ ບັນດານະໂຍບາຍສົ່ງເສີມ, ລະດົມທຶນ ຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;

7) ຊີ້ນຳ, ຕິດຕາມ, ກວດກາ, ປະເມີນ, ເກັບກຳສັງລວມ ບັນດາຂໍ້ມູນ ສະຖິຕິ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນແຕ່ລະໄລຍະ ເປັນຕົ້ນແມ່ນ ຂໍ້ມູນ ກ່ຽວກັບການຈັດຕັ້ງປະຕິບັດແຜນງານ, ໂຄງການ, ກອງທຶນຕ່າງໆ ແລະ ອື່ນໆ;

8) ສະຫຼຸບ, ສັງລວມ, ລາຍງານ ສະພາບການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງແຕ່ລະພາກສ່ວນ ລວມທັງຢູ່ຂັ້ນທ້ອງຖິ່ນ ເພື່ອສັງລວມລາຍງານ ລັດຖະບານ, ສະພາແຫ່ງຊາດ ແລະ ສູນກາງພັກ ເປັນແຕ່ລະໄລຍະ ໃນນີ້ ລວມທັງການຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນດ້ານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;

9) ຈັດກອງປະຊຸມພາຍໃນຄະນະ ເພື່ອປຶກສາຫາລືແບ່ງຄວາມຮັບຜິດຊອບກັນຢ່າງລະອຽດຈະແຈ້ງ; ກຳນົດແຜນການເຄື່ອນໄຫວ (ແຜນດຳເນີນງານ) ຂອງຄະນະ ເປັນແຕ່ລະໄລຍະຢ່າງລະອຽດຈະແຈ້ງ; ພ້ອມທັງປະຕິບັດລະບອບປະຊຸມ, ການຕິດຕາມ ຊຸກຍູ້, ກວດກາປະເມີນຜົນ ແລະ ການສະຫຼຸບສ່ອງແສງລາຍງານ ເປັນປົກກະຕິ;

10) ມີສິດຮຽກເຊີນຂະແໜງການການກ່ຽວຂ້ອງ ແລະ ທ້ອງຖິ່ນ ກໍຄືພາຍໃນຄະນະ ເພື່ອປະຊຸມປຶກສາຫາລືວຽກງານ ກ່ຽວກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;

11) ຄົ້ນຄວ້າແຕ່ງຕັ້ງພະນັກງານ ເພື່ອເປັນເສນາທິການຊ່ວຍວຽກໃນຂະແໜງການ ແລະ ທ້ອງຖິ່ນ ຂອງຕົນຕາມຄວາມເໝາະສົມ;

12) ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ ຕາມການເຊື້ອເຊີນ ແລະ ຕາມການມອບໝາຍຂອງລັດຖະບານ ແລະ ທ່ານນາຍົກລັດຖະມົນຕີ;

13) ຄົ້ນຄວ້າ ນຳສະເໜີຂັ້ນເທິງໃຫ້ການຍ້ອງຍໍ, ຊົມເຊີຍ ການຈັດຕັ້ງ ແລະ ບຸກຄົນ ຂະແໜງການກ່ຽວຂ້ອງ ທີ່ມີຜົນງານດີເດັ່ນ ໃນວຽກງານດັ່ງກ່າວ;

14) ປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດອື່ນໆ ຕາມການຊີ້ນຳ ຂອງລັດຖະບານ, ທ່ານນາຍົກລັດຖະມົນຕີ ແລະ ຂັ້ນເທິງ.

ມາດຕາ 2 ແຕ່ງຕັ້ງ ກອງເລຂາຊ່ວຍວຽກຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂັ້ນສູນກາງ, ປະກອບດ້ວຍພາກສ່ວນກ່ຽວຂ້ອງ ດັ່ງນີ້:

1. ທ່ານ ຮອງລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຫົວໜ້າກອງເລຂາ;
2. ທ່ານ ຫົວໜ້າກົມພັດທະນາຊົນນະບົດ, ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຮອງ, ທັງເປັນຜູ້ປະຈຳການ;
3. ທ່ານ ຮອງຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ;
4. ທ່ານ ຮອງຫົວໜ້າຫ້ອງການ ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ;
5. ທ່ານ ຮອງຫົວໜ້າກົມປົກຄອງທ້ອງຖິ່ນ ກະຊວງ ພາຍໃນ ເປັນຄະນະ;
6. ທ່ານ ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ;
7. ບັນດາທ່ານ ຮອງຫົວໜ້າກົມພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ.

ສຳລັບລາຍຊື່ລະອຽດ ຂອງກອງເລຂາຊ່ວຍວຽກແມ່ນມອບໃຫ້ ທ່ານ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳວຽກງານຂົງເຂດການປົກຄອງ ແລະ ວັດທະນະທຳ-ສັງຄົມ ຫົວໜ້າຄະນະ ເປັນຜູ້ແຕ່ງຕັ້ງໃນແຕ່ລະໄລຍະ.

ຂອບເຂດສິດ ກອງເລຂາຊ່ວຍວຽກຄະນະ ດັ່ງກ່າວ ມີດັ່ງນີ້:

- ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ກອງເລຂາຊ່ວຍວຽກຄະນະ ດັ່ງກ່າວ ມີດັ່ງນີ້: ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ກອງເລຂາຊ່ວຍວຽກຄະນະພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

1. ມີພາລະບົດບາດ ເປັນເສນາທິການ ໃຫ້ແກ່ຄະນະພັດທະນາຊົນນະບົດ ແລະ ແກ້ໄຂ ຂັ້ນສູນກາງ ໃນການປະສານງານ ແລະ ຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂ ຄວາມທຸກຍາກ ຂອງປະຊາຊົນ;
2. ມີໜ້າທີ່ຊ່ວຍວຽກຄະນະພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂັ້ນສູນກາງ ຕາມພາລະ ບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຂະແໜງການຕົນ;
3. ຊຸກຍູ້ຂະແໜງການກ່ຽວຂ້ອງ ແລະ ທ້ອງຖິ່ນ ເພື່ອສ້າງແຜນຍຸດທະສາດການລົງທຶນໄລຍະຍາວ, ໄລຍະ ກາງ ແລະ ປະຈໍາປີ ເພື່ອພັດທະນາພື້ນຖານໂຄງລ່າງອັນຈໍາເປັນໃນການເອື້ອອໍານວຍການພັດທະນາ ຊົນນະບົດ, ປັບປຸງລະບົບການຜະລິດພັດທະນາອາຊີບຂອງປະຊາຊົນ ແລະ ຄົ້ນຄວ້າ ກໍານົດຈຸດສຸມເປົ້າ ໝາຍບຸລິມະສິດຕ່າງໆ ລະຫວ່າງສູນກາງ ແລະ ທ້ອງຖິ່ນ, ລວມທັງການຄົ້ນຄວ້າ ເພື່ອກໍານົດ ມາດຕະຖານ ແລະ ຕົວຊີ້ວັດແຫ່ງຊາດ ກ່ຽວກັບ ວຽກງານພັດທະນາຊົນນະບົດໃໝ່ (ມາດຕະຖານ ການພົ້ນທຸກ ແລະ ການພັດທະນາ) ແລະ ປະເມີນມາດຕະຖານດັ່ງກ່າວ, ລວມທັງ ສັງລວມລາຍງານ ຄະນະພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂັ້ນສູນກາງ;
4. ຄົ້ນຄວ້າມະຕິ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ, ຄາດໝາຍສູ້ຊົນຂະແໜງການຕົນ ມາເປັນ ແຜນການ, ແຜນງານ, ໂຄງການລະອຽດ ເພື່ອສຸມໃສ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກ ຍາກຂອງປະຊາຊົນໃຫ້ໄດ້ ຕາມເປົ້າໝາຍ ທີ່ພັກ ແລະ ລັດຖະບານ ໄດ້ວາງອອກແຕ່ລະໄລຍະ;
5. ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດ ບັນດາໂຄງການລົງທຶນຂອງລັດ ລວມທັງທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຈາກຕ່າງປະເທດ, ທີ່ສະໜັບສະໜູນ ໃຫ້ແກ່ການພັດທະນາຊົນນະບົດ ແລະ ແກ້ໄຂ ຄວາມທຸກຍາກ, ຈັດສັນພູມລໍາເນົາ ແລະ ອາຊີບທີ່ໝັ້ນຄົງ ໃຫ້ແກ່ປະຊາຊົນ;
6. ປະສານກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ສ້າງບັນດານະໂຍບາຍສົ່ງເສີມ, ລະດົມທຶນຈາກ ພາຍ ໃນ ແລະ ຕ່າງປະເທດ ເຂົ້າໃສ່ການຈັດຕັ້ງປະຕິບັດ ແຜນງານ ແລະ ໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;
7. ເປັນເຈົ້າການຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບ, ສັງລວມ ບັນດາຂໍ້ມູນສະຖິຕິ, ສະພາບ ການຈັດຕັ້ງປະຕິບັດ ບັນດາໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ລວມທັງ ການ ຊຸກຍູ້ ບັນດາກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ), ກອງທຶນພັດທະນາບ້ານ (ກພບ), ສະຖາບັນ ການເງິນຕ່າງໆ ແລະ ກອງທຶນອື່ນໆ ໃຫ້ເຂົ້າມາມີສ່ວນຮ່ວມໃນການພັດທະນາຊົນນະ ບົດ ແລະ ແກ້ ໄຂຄວາມທຸກຍາກ;
8. ຈັດຕັ້ງການຝຶກອົບຮົມ, ທັດສະນະສຶກສາ, ແລກປ່ຽນບົດຮຽນ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງ ຂີດຄວາມສາມາດໃຫ້ແກ່ພະນັກງານ ໃນຂົງເຂດຕ່າງໆ ທີ່ໄດ້ປະກອບສ່ວນຈັດຕັ້ງປະຕິບັດ ວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ສູນກາງ ແລະ ທ້ອງຖິ່ນ;
9. ປະສານສົມທົບກັບ ບັນດາຂະແໜງການ ໃນຄະນະຮັບຜິດຊອບ ເພື່ອສຸມໃສ່ຈັດຕັ້ງປະຕິບັດວຽກ ງານ ຂອງຂະແໜງການຕົນ ຢູ່ບໍລິເວນຈຸດສຸມພັດທະນາ ແລະ ເຂດຊົນນະບົດ ຫ່າງໄກສອກຫຼີກ ເພື່ອສູ້ຊົນ ໃຫ້ບັນລຸຄາດໝາຍຂອງຂະແໜງການຕົນ ຕາມມາດຕະຖານ, ຕົວຊີ້ວັດ ການພົ້ນທຸກ ແລະ ມາດຕະຖານພັດທະນາ ແລະ ຕາມຄາດໝາຍທີ່ຂະແໜງການຕົນວາງໄວ້ ໃນແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ແຕ່ລະໄລຍະ;

10. ສະຫຼຸບສັງລວມ ລາຍງານ ສະພາບການຈັດຕັ້ງປະຕິບັດ ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນຂອບເຂດທົ່ວປະເທດ ເພື່ອລາຍງານຄະນະນຳ ຢ່າງເປັນປົກກະຕິ, ຈັດຕັ້ງການສະຫຼຸບຖອດຖອນບົດຮຽນ ຮ່ວມກັບຂະແໜງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດ ວຽກງານດັ່ງກ່າວ ໃນແຕ່ລະໄລຍະ;

11. ມີສິດຮຽກເຊີນປະຊຸມ ເພື່ອປຶກສາຫາລືວຽກງານ ຕາມຂັ້ນຄຸ້ມຄອງ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ ຕາມການເຊື້ອເຊີນ ແລະ ຕາມການມອບໝາຍ ຂອງຄະນະພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂັ້ນສູນກາງ ແລະ ຂັ້ນເທິງ;

12. ແຕ່ງຕັ້ງພະນັກງານ ໃນກົມກອງ ຂອງຕົນ ເພື່ອຊ່ວຍວຽກ ຕາມຄວາມເໝາະສົມ;

13. ປະຕິບັດຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດອື່ນໆ ຕາມການຊີ້ນຳ ຂອງຄະນະພັດທະ ນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂັ້ນສູນກາງ.

ມາດຕາ 3 ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າ ທີ່ກ່ຽວຂ້ອງ ເປັນຜູ້ຄົ້ນຄວ້າກຳນົດຈຸດປະສານງານ ແລະ ແຕ່ງຕັ້ງພະນັກງານເປັນກອງເລຂາ ເພື່ອຮັບຜິດຊອບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງກະຊວງ, ອົງການຕົນ ແລ້ວລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເພື່ອພົວພັນປະສານວຽກງານນຳກັນໄດ້ຢ່າງ ສະດວກ ແລະ ໄລ່ງລ່ຽນ;

ມາດຕາ 4 ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການ ຕາມມາດຕາ 1 ແລະ ມາດຕາ 2 ຄົ້ນຄວ້າແຕ່ງຕັ້ງຜູ້ຕາງໜ້າ ຂອງຂະແໜງການຕົນ ແລ້ວແຈ້ງລາຍຊື່ໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອບັນຈຸເຂົ້າໃນຄະນະ ແລະ ປະຕິບັດໜ້າທີ່ຕາມການມອບໝາຍ. ສຳລັບບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ກໍ່ໃຫ້ແຕ່ງຕັ້ງຄະນະພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຄືກັນກັບໂຄງປະກອບບຸກຄະລາກອນ ຕາມຂັ້ນສູນກາງ ເປັນບ່ອນອີງໃນການແຕ່ງຕັ້ງ;

ມາດຕາ 5 ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງໃນທົ່ວປະເທດ, ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ;

ມາດຕາ 6 ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ